# ສົ່ງເສີມການຜະລິດຍານ

## ໃນແຂວງຫຼວງພະບາງ



*ຍານ ໃນປະເທດລາວ ແມ່ນຢາງຍານທີ່ບັກຈາກຕົ້ນຍານ ເປັນທີ່ຮູ້ຈັກກັນວ່າ ເປັນ "ຍານສະຫຍາມ", ເປັນຢາງຍານທີ່ມີຄຸນນະພາບສູງ, ໃຊ້ເປັນຫົວເຊື້ອນ້ຳຫອມ ແລະ ຜະລິດຕະພັນເຄື່ອງຫອມອື່ນໆ. ຢາງຍານຍັງໃຊ້ເຂົ້າໃນການເຮັດທູບ ແລະ ເຮັດເປັນຢາພື້ນເມືອງໃນບັນດາປະເທດຕາເວັນອອກ, ແຕ່ວ່າ ຢາງຍານທີ່ມີຄຸນນະພາບຂອງລາວ ແມ່ນຫາຍາກ ແລະ ມີຄວາມຕ້ອງການສູງ. ຕົ້ນຍານເກີດຢູ່ຕາມພື້ນທີ່ສູງ ຂອງລາວ ຊຶ່ງເປັນຕົ້ນໄມ້ຊະນິດໜຶ່ງທີ່ເກີດຂຶ້ນໃນພື້ນທີ່ ພາຍຫລັງທີ່ໄດ້ເຮັດໄຮ່ແບບລະບົບໝູນວຽນມາແລ້ວ.*





## ນິເວດວິທະຍາ ແລະ ການຄຸ້ມຄອງ

- ດອກຍານຈະເລີ່ມອອກໃນເດືອນ ມີນາ ເຖິງ ພຶດສະພາ ແລະ ໝາກເປັນແຕ່ເດືອນມິຖຸນາ ເຖິງ ກໍລະກົດ.
- ແກ່ນສາມາດເກັບຮັກສາໄວ້ໄດ້ໜຶ່ງປີ.
- ແກ່ນຈະເລີ່ມງອກແຕ່ເດືອນ ມີນາ ເຖິງ ມິຖຸນາ
- ເບ້ຍນ້ອຍທີ່ເກີດຢູ່ອ້ອມຕົ້ນໃຫຍ່ສາມາດແຍກໄປປູກບໍລິເວນໃກ້ຄຽງໄດ້.
- ຢາງຍານສາມາດເກັບກູ້ໄດ້ແຕ່ເດືອນຕຸລາ ເຖິງ ມີນາ.

## ການຜະລິດ

- ຕົ້ນຍານ ແມ່ນໄດ້ພົບເຫັນຢູ່ໃນ 7 ບ້ານ ຂອງ ເມືອງໂພນທອງ.
- ມີ 232 ຄອບຄົວ ທີ່ໄດ້ມີການວາງແຜນຄຸ້ມຄອງ ຕົ້ນຍານ ໃນເນື້ອທີ່ດິນ 762 ຮຕ.
- ປ່າຕົ້ນຍານ ແມ່ນໄດ້ຖືກຄຸ້ມຄອງເປັນຂອງລວມໝູ່ ແລະ ຄອບຄົວ, ຊຶ່ງຂຶ້ນກັບຊຸມຊົນໃນທ້ອງຖິ່ນ.
- ການເກັບກູ້ຜົນຜະລິດຢາງຍານໄດ້ທັງໝົດ ປະມານ 17,000 ໂຕນ ຕໍ່ ໜຶ່ງປີ.



## ການຕະຫຼາດ

- ການຕະຫລາດຢາງຍານ ແມ່ນຖືກຄວບຄຸມ ໂດຍຜູ້ຊື້ຈຳນວນໜ້ອຍໜຶ່ງ ເຊັ່ນ: ບໍລິສັດອານຸພາບ ແລະ ກະສິກຳ-ປ່າໄມ້.
- ຍ້ອນວ່າຢາງຍານມີລາຄາສູງ ແລະ ຈຶ່ງເຮັດໃຫ້ມີການແຂ່ງຂັນໃນການເກັບກູ້, ຈຶ່ງຖືກເກັບກູ້ກ່ອນກຳໜົດ ຈຶ່ງເປັນສາເຫດເຮັດຜົນຜະລິດມີຄຸນນະພາບ ແລະ ລາຄາຕ່ຳ.
- ພະແນກ/ຫ້ອງການກະສິກຳ ແລະ ປ່າໄມ້ ໄດ້ໃຫ້ການສະໜັບສະໜູນທາງດ້ານຕະຫລາດຢາງຍານ.

## ໂອກາດ

- ການວາງແຜນນຳໃຊ້ທີ່ດິນ ໄດ້ກຳໜົດພື້ນທີ່ ການຜະລິດຍານເອົາໄວ້ແລ້ວ ແລະ ການຄຸ້ມຄອງປ່າຍານຍັງຈະຕ້ອງໄດ້ເຮັດສືບຕໍ່ໄປອີກ.
- ກຳມະສິດຄຸ້ມຄອງຕົ້ນຍານ ແມ່ນເປັນສິ່ງທີ່ຈຳເປັນ ເພື່ອຮັບປະກັນໃຫ້ມີການຄຸ້ມຄອງທີ່ດີ ແລະ ມີການເກັບກູ້ຕາມກຳໜົດເວລາ.
- ຍົກລະດັບການຮ່ວມມື, ຄວາມເປັນເອກະພາບ ແລະ ຍູດຕິທຳດ້ານການຕະຫລາດ ລະຫວ່າງຜູ້ຊື້ ແລະ ຜູ້ຂາຍຢາງຍານທັງສອງຝ່າຍ.
- ສ້າງຕັ້ງກຸ່ມຜູ້ຜະລິດຍານ.
- ຍົກລະດັບຄຸນນະພາບ ຂອງ ຢາງຍານ ໂດຍການສ້າງລະບົບການຄ້ຳປະກັນແບບມີສ່ວນຮ່ວມ ຕິດພັນກັນ ລະຫວ່າງ ຊາວກະສິກອນ ກັບ ຜູ້ຊົມໃຊ້.
- ເລີ່ມສ້າງທ່າແຮງເພື່ອໃຫ້ໄດ້ຮັບ ການຢັ້ງຢືນພູມສັນຖານ (GI) ຢາງຍານໃນປະເທດລາວ.



Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development
and Cooperation SDC

NAFRI

TABI
The Agro-Biodiversity Initiative (TABI)